**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ປະທານປະເທດ**

ເລກທີ 323 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 25 ທັນວາ 2017

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍກຳມະບານລາວ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 071/ສພຊ, ລົງວັນທີ 15 ພະຈິກ 2017 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍກຳມະບານລາວ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 035/ຄປຈ, ລົງວັນທີ 12 ທັນວາ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍ ວ່າດ້ວຍກຳມະບານລາວ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 071 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 15/11/17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍກຳມະບານລາວ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍກຳມະບານລາວ (ສະບັບປັບປຸງ) ໃນວາລະກອງປະຊຸມ ຕອນບ່າຍຂອງ ວັນທີ 15 ພະຈິກ 2017.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍກຳມະບານລາວ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 39 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 15 ພະຈິກ 2017

# ກົດໝາຍ
# ວ່າດ້ວຍກຳມະບານລາວ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ກວດກາວຽກງານຂອງກຳມະບານລາວ ເພື່ອຮັບປະກັນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ມີປະສິດທິຜົນສູງ ແນໃສ່ເຕົ້າໂຮມກຳລັງແຮງ, ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນ ປະກອບສ່ວນເຂົ້າໃນພາລະກິດການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 2 (ປັບປຸງ) ກຳມະບານລາວ**

ກຳມະບານລາວ ແມ່ນ ການຈັດຕັ້ງມະຫາຊົນທີ່ກວ້າງຂວາງ ໃນລະບົບການເມືອງ ຂອງລະບອບປະຊາທິປະໄຕ ປະຊາຊົນ ທີ່ມີພັກປະຊາຊົນປະຕິວັດລາວເປັນແກນນຳ, ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນໆ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພະນັກງານກຳມະບານອາຊີບ** ໝາຍເຖິງ ບຸກຄົນ ທີ່ໄດ້ຮັບການເລືອກຕັ້ງ ຫຼື ແຕ່ງຕັ້ງ ຫຼື ມອບໝາຍໃຫ້ປະຕິບັດໜ້າທີ່ວຽກງານເປັນປະຈຳ ໃນກົງຈັກການຈັດຕັ້ງ ສະຫະພັນກຳມະບານລາວ;
2. **ພະນັກງານກຳມະບານເຄິ່ງອາຊີບ** ໝາຍເຖິງ ບຸກຄົນ ທີ່ໄດ້ຮັບເລືອກຕັ້ງ ຫຼື ແຕ່ງຕັ້ງ ຫຼື ມອບໝາຍໃຫ້ປະຕິບັດໜ້າທີ່ວຽກງານກຳມະບານທີ່ບໍ່ປະຈຳການ ໂດຍຄວບຕຳແໜ່ງບໍລິຫານ ຫຼື ວິຊາສະເພາະໃດໜຶ່ງ;

3. **ກຳມະບານຮາກຖານ** ໝາຍເຖິງ ການຈັດຕັ້ງກຳມະບານ ຢູ່ໃນການຈັດຕັ້ງຂັ້ນຮາກຖານ, ຫົວໜ່ວຍແຮງງານ ທີ່ມີສະມາຊິກກຳມະບານ ໜ້ອຍກວ່າ ໜຶ່ງຮ້ອຍຄົນ;

4. **ສະຖາບັນການສຶກສາໃຫຍ່, ໂຮງງານໃຫຍ່, ກຸ່ມບໍລິສັດໃຫຍ່** ໝາຍເຖິງ ການຈັດຕັ້ງ, ຫົວໜ່ວຍແຮງງານ ທີ່ມີສະມາຊິກກຳມະບານ ແຕ່ ໜຶ່ງຮ້ອຍຄົນ ຂຶ້ນໄປ;

5. **ຜູ້ອອກແຮງງານອື່ນ** ໝາຍເຖິງ ພະນັກງານ-ລັດຖະກອນ, ນັກສຶກສາ, ປັນຍາຊົນ, ຊາວກະສິກອນ, ນາຍຊ່າງ, ຜູ້ບໍລິການ ແລະ ຜູ້ປະກອບອາຊີບອິດສະລະ ທີ່ອອກແຮງງານດ້ວຍຮ່າງກາຍ, ດ້ວຍມັນສະໝອງ. ຊາວຜູ້ອອກແຮງງານອື່ນ ລວມມີ ຜູ້ອອກແຮງງານໃນລະບົບ ແລະ ຜູ້ອອກແຮງງານນອກລະບົບ;

6. **ຜູ້ອອກແຮງງານໃນລະບົບ** ໝາຍເຖິງ ຜູ້ອອກແຮງງານ ທີ່ເຮັດວຽກຢູ່ໃນຫົວໜ່ວຍແຮງງານ ຊຶ່ງໄດ້ຂຶ້ນທະບຽນຕາມກົດໝາຍ;

7. **ຜູ້ອອກແຮງງານນອກລະບົບ** ໝາຍເຖິງ ຜູ້ອອກແຮງງານທີ່ເຮັດວຽກຢູ່ນອກຫົວໜ່ວຍແຮງງານ ລວມທັງຜູ້ເຮັດວຽກ ຫຼື ປະກອບອາຊີບແບບອິດສະລະ;

8. **ຫົວໜ່ວຍແຮງງານ** ໝາຍເຖິງ ຫົວໜ່ວຍການຜະລິດ, ທຸລະກິດ ຫຼື ການບໍລິການ ຂອງທຸກພາກສ່ວນເສດຖະກິດ-ສັງຄົມ ທີ່ໄດ້ຂຶ້ນທະບຽນຕາມກົດໝາຍ;

9. **ກຸ່ມການຜະລິດ** ໝາຍເຖິງ ການຈັດຕັ້ງກຸ່ມ, ສະຫະກອນ ຫຼື ສະມາຄົມການຜະລິດ ຕາມສາຂາອາຊີບ ເປັນຕົ້ນ ກຸ່ມອຸດສາຫະກຳ, ຊ່າງຫັດຖະກຳ, ຊາວກະສິກອນ ຫຼື ອາຊີບອື່ນໆ;

10. **ພະຍາດອາຊີບ** ໝາຍເຖິງ ພະຍາດທຸກຂະນິດ ທີ່ເກີດຂຶ້ນ ຈາກການອອກແຮງງານ;

11. **ຫຼັກການ ສາມຝ່າຍ** ໝາຍເຖິງ ກົນໄກການປຶກສາຫາລື ເພື່ອແກ້ໄຂບັນຫາແຮງງານ ໂດຍຄະນະກຳມະການ ສາມຝ່າຍ ຊຶ່ງລວມມີ ອົງການຕາງໜ້າລັດຖະບານ, ອົງການຕາງໜ້າຜູ້ໃຊ້ແຮງງານ ແລະ ອົງການຕາງໜ້າຜູ້ອອກແຮງງານ;

12. **ອົງການຕາງໜ້າລັດຖະບານ** ໝາຍເຖິງ ອົງການຈັດຕັ້ງລັດ ທີ່ຖືກມອບໝາຍ: ກະຊວງແຮງງານ ແລະ ສະຫວັດດີການສັງຄົມ; ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງ; ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ, ເທດສະບານ, ນະຄອນ ແລະ ໜ່ວຍງານແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນບ້ານ;

13. **ອົງການຕາງໜ້າຜູ້ໃຊ້ແຮງງານ** ໝາຍເຖິງ ອົງການຈັດຕັ້ງ ທີ່ຖືກມອບໝາຍ: ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ, ສະພາການຄ້າ ແລະ ອຸດສາຫະກຳແຂວງ, ນະຄອນຫຼວງ;

14. **ອົງການຕາງໜ້າຜູ້ອອກແຮງງານ** ໝາຍເຖິງ ສູນກາງສະຫະພັນກຳມະບານລາວ; ສະຫະພັນກຳມະບານກະຊວງ, ອົງການ, ສະຫະພັນກຳມະບານແຂວງ, ນະຄອນຫຼວງ; ສະຫະພັນກຳມະບານເມືອງ, ເທດສະບານ, ນະຄອນ ແລະ ກຳມະບານຮາກຖານ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານກຳມະບານ**

ລັດ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນ ໂດຍສະຫະພັນກຳມະບານລາວ ເປັນຕົວແທນ.

ລັດ ຊຸກຍູ້ ແລະ ສົ່ງເສີມ ການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນທຸກຂັ້ນ, ຫົວໜ່ວຍແຮງງານ ທັງພາກລັດ, ເອກະຊົນ ແລະ ຫົວໜ່ວຍແຮງງານ ການລົງທຶນຂອງຕ່າງປະເທດ ໃຫ້ມີການຈັດຕັ້ງ ແລະ ເຄື່ອນໄຫວວຽກງານກຳມະບານ; ສະໜອງງົບປະມານ, ບຸກຄະລາກອນ ແລະ ສິ່ງອຳນວຍຄວາມສະດວກ ໃຫ້ການຈັດຕັ້ງດັ່ງກ່າວຢ່າງເໝາະສົມ.

**ມາດຕາ 5 (ປັບປຸງ) ຫຼັກການ ກ່ຽວກັບວຽກງານກຳມະບານ**

ການເຄື່ອນໄຫວວຽກງານກຳມະບານ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ກົດລະບຽບ ຂອງສະຫະພັນກຳມະບານລາວ;
2. ລວມສູນປະຊາທິປະໄຕ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ;
3. ຕື່ນຕົວ ສະໝັກໃຈເຂົ້າເປັນສະມາຊິກ ແລະ ເຄື່ອນໄຫວວຽກງານກຳມະບານ;
4. ປະຕິບັດຫຼັກການ ສາມຝ່າຍ ແລະ ປະສານສົມທົບກັບອົງການລັດທີ່ກ່ຽວຂ້ອງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ;
5. ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ສະມາຊິກກຳມະບານ, ພະນັກງານ-ລັດຖະກອນ, ນັກສຶກສາ-ປັນຍາຊົນ ຢູ່ໃນການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ; ກຳມະກອນ ແລະ ຜູ້ອອກແຮງງານໃນລະບົບ, ນອກລະບົບ ຢູ່ຫົວໜ່ວຍແຮງງານ ໃນ ສປປ ລາວ.

ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານກຳມະບານ ໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກຳມະບານ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ການຝຶກອົບຮົມ, ການສ້າງບຸກຄະລາກອນ ແລະ ການປະຕິບັດສົນທິສັນຍາ, ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການຈັດຕັ້ງ ຂອງກຳມະບານລາວ
### ໝວດທີ 1
### ສະຫະພັນກຳມະບານລາວ

**ມາດຕາ 8 (ປັບປຸງ) ສະຫະພັນກຳມະບານລາວ**

ສະຫະພັນກຳມະບານລາວ ແມ່ນ ລະບົບການຈັດຕັ້ງຂອງກຳມະບານລາວ, ເປັນການຈັດຕັ້ງການເມືອງ-ສັງຄົມ ຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານລາວ ຊຶ່ງໄດ້ຮັບການສ້າງຕັ້ງ, ນຳພາ ແລະ ສຶກສາອົບຮົມ ໂດຍພັກປະຊາຊົນປະຕິວັດລາວ.

**ມາດຕາ 9 (ປັບປຸງ) ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະຫະພັນກຳມະບານລາວ**

ສະຫະພັນກຳມະບານລາວ ຈັດຕັ້ງຂຶ້ນຢູ່ບັນດາການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ຫົວໜ່ວຍແຮງງານ ມີຖານະທຽບເທົ່າອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນອື່ນ ໃນຂັ້ນດຽວກັນ.

ສະຫະພັນກໍາມະບານລາວ ແມ່ນ ອີງການເລືອກຕັ້ງ. ຄະນະບໍລິຫານງານສະຫະພັນກໍາມະບານແຕ່ລະຂັ້ນ ໄດ້ມາຈາກການເລືອກຕັ້ງໂດຍກົງ ຂອງຜູ້ແທນກອງປະຊຸມໃຫຍ່ ແລະ ເຄື່ອນໄຫວວຽກງານຢູ່ພາຍໃຕ້ການນໍາພາໂດຍກົງ ແລະ ຮອບດ້ານຂອງຄະນະພັກ ຂັ້ນຂອງຕົນ.

ສະຫະພັນກໍາມະບານລາວ ເຄື່ອນໄຫວວຽກງານ ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງສະມາຊິກກໍາມະບານ, ກໍາມະກອນ ແລະ ຊາວຜູ້ອອກແຮງງານອື່ນ ດ້ວຍຮູບແບບບໍລິການສາທາລະນະ ແລະ ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ເຮັດວຽກເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ຂັ້ນລຸ່ມ ປະຕິບັດຕາມຂັ້ນເທິງ, ບຸກຄົນ ປະຕິບັດຕາມການຈັດຕັ້ງ ແລະ ທົ່ວສະຫະພັນກໍາມະບານລາວ ປະຕິບັດຕາມມະຕິກອງປະຊຸມ.

**ມາດຕາ 10 (ປັບປຸງ) ພາລະບົດບາດ ຂອງສະຫະພັນກໍາມະບານລາວ**

ສະຫະພັນກໍາມະບານລາວ ມີພາລະບົດບາດ ດັ່ງນີ້:

1. ໂຄສະນາ, ສຶກສາອົບຮົມ, ປຸກລະດົມ, ເຕົ້າໂຮມຄວາມສາມັກຄີ ສະມາຊິກກໍາມະບານ, ກໍາມະກອນ ແລະ ຊາວຜູ້ອອກແຮງງານອື່ນ ມີຄວາມຕື່ນຕົວທາງການເມືອງ, ຮູ້ສິດ, ພັນທະ ແລະ ຜົນປະໂຫຍດຂອງຕົນ, ມີຄວາມຮູ້ ຄວາມສາມາດທາງດ້ານວິທະຍາສາດ ເຕັກໂນໂລຊີ, ມີອະລິຍະທໍາທາງດ້ານຈິດໃຈ ແລະ ມີວິໄນໃນການອອກແຮງງານ;

2. ເປັນຕົວແທນແຫ່ງການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງສະມາຊິກກໍາມະບານ, ກໍາມະກອນ ແລະ ຊາວຜູ້ອອກແຮງງານອື່ນໆ;

3. ຕິດຕາມ, ກວດກາ ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ, ວັດທະນະທໍາ-ສັງຄົມ ຂອງອົງການລັດແຕ່ລະຂັ້ນ ແລະ ຫົວໜ່ວຍແຮງງານ;

4. ເຂົ້າຮ່ວມຕິດຕາມ, ກວດກາການເຄື່ອນໄຫວ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກຂອງສະພາດັ່ງກ່າວ.

## ໝວດທີ 2
## ລະບົບການຈັດຕັ້ງ ຂອງສະຫະພັນກໍາມະບານລາວ

**ມາດຕາ 11 (ປັບປຸງ) ລະບົບການຈັດຕັ້ງ ຂອງສະຫະພັນກໍາມະບານລາວ**

ລະບົບການຈັດຕັ້ງ ຂອງສະຫະພັນກໍາມະບານລາວ ມີ ສີ່ ຂັ້ນ ດັ່ງນີ້:

1. ສູນກາງສະຫະພັນກໍາມະບານລາວ;
2. ສະຫະພັນກໍາມະບານ ກະຊວງ, ອົງການ, ແຂວງ, ນະຄອນຫຼວງ;
3. ສະຫະພັນກໍາມະບານ ເມືອງ, ເທດສະບານ, ນະຄອນ, ສະຖາບັນການສຶກສາໃຫຍ່, ໂຮງງານໃຫຍ່, ກຸ່ມບໍລິສັດໃຫຍ່;
4. ກໍາມະບານຮາກຖານ.

**ມາດຕາ 12 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສູນກາງສະຫະພັນກໍາມະບານລາວ**

ສູນກາງສະຫະພັນກໍາມະບານລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ຫັນເອົາແນວທາງ, ນະໂຍບາຍ ແລະ ມະຕິກອງປະຊຸມໃຫຍ່ ຜູ້ແທນກໍາມະບານທົ່ວປະເທດ ໃຫ້ເປັນແຜນການ, ແຜນງານ, ໂຄງການ ແລະ ກິດຈະກໍາລະອຽດ ໃນແຕ່ລະໄລຍະ;

2. ສຶກສາອົບຮົມ, ໂຄສະນາ, ເຜີຍແຜ່ແນວທາງ, ນະໂຍບາຍ, ກົດໝາຍ, ມະຕິກອງປະຊຸມໃຫຍ່ຂອງກຳມະບານລາວ ໃຫ້ແກ່ສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນ ຮັບຮູ້ເຊື່ອມຊຶມຢ່າງທົ່ວເຖິງ;

3. ເຕົ້າໂຮມຄວາມສາມັກຄີ, ປຸກລະດົມ ສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນເຂົ້າຮ່ວມຂະບວນການແຂ່ງຂັນ, ສ້າງເງື່ອນໄຂໃຫ້ເຂົາເຈົ້າໄດ້ຝຶກຝົນ ຫຼໍ່ຫຼອມຕົນເອງຢ່າງຮອບດ້ານ;

4. ສະເໜີສ້າງ ແລະ ປັບປຸງກົດໝາຍທີ່ກ່ຽວຂ້ອງ, ພິຈາລະນາຮັບຮອງເອົາ ແລະ ປະກາດໃຊ້ນິຕິກຳໃຕ້ກົດໝາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ; ປະກາດລຶບລ້າງ ຫຼື ໂຈະການປະຕິບັດມະຕິ, ຄຳແນະນຳ, ແຈ້ງການ, ລະບຽບການ ຂອງສະຫະພັນກຳມະບານຂັ້ນລຸ່ມ ທີ່ບໍ່ສອດຄ່ອງກັບກົດໝາຍ, ກົດລະບຽບ ຫຼື ມະຕິກອງປະຊຸມໃຫຍ່ຜູ້ແທນກຳມະບານລາວທົ່ວປະເທດ;

5. ພິຈາລະນາສ້າງຕັ້ງ ຫຼື ຍຸບເລີກ ກົງຈັກຊ່ວຍວຽກຂັ້ນຂອງຕົນ; ອະນຸຍາດສ້າງຕັ້ງ ຫຼື ຍຸບເລີກການຈັດຕັ້ງກຳມະບານຂັ້ນລຸ່ມຂອງຕົນ; ກໍ່ສ້າງ, ບຳລຸງ, ຍົກລະດັບທິດສະດີ, ວິຊາສະເພາະວຽກງານກຳມະບານ ໃຫ້ພະນັກງານກຳມະບານແຕ່ລະຂັ້ນ;

6. ຮັບຮອງເອົາ ການແຕ່ງຕັ້ງຜູ້ຕາງໜ້າຜູ້ອອກແຮງງານຢູ່ຫົວໜ່ວຍແຮງງານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ເຂົ້າຮ່ວມກອງປະຊຸມປຶກສາຫາລື ແລະ ແກ້ໄຂບັນຫາທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນ ຕາມກົນໄກການປະສານງານ ສາມຝ່າຍ;

8. ເກັບກຳສະຖິຕິ, ອອກບັດໃຫ້ສະມາຊິກກຳມະບານ ທັງຢູ່ພາຍໃນ, ຢູ່ຕ່າງປະເທດ ເພື່ອຕິດຕາມການເຄື່ອນໄຫວ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງເຂົາເຈົ້າ;

9. ຕິດຕາມ ສະພາບແວດລ້ອມການອອກແຮງງານ, ຮັບຟັງຄຳຄິດ ຄຳເຫັນ, ຄວາມມຸ່ງມາດປາຖະໜາ ແລະ ຕາງໜ້າກຳມະກອນ, ຊາວຜູ້ອອກແຮງງານອື່ນ ສ້າງສັນຍາແຮງງານລວມໝູ່ ຢູ່ຫົວໜ່ວຍແຮງງານຂັ້ນຂອງຕົນ;

10. ຂົນຂວາຍ ແລະ ຊຸກຍູ້ ຈັດຕັ້ງກຳມະບານຮາກຖານ ຢູ່ກຸ່ມການຜະລິດ, ກຸ່ມວິຊາຊີບ ໃຫ້ແກ່ແຮງງານນອກລະບົບ;

11. ປະກອບສ່ວນຊຸກຍູ້, ສົ່ງເສີມການຝຶກອົບຮົມ ພັດທະນາສີມືແຮງງານ, ສະໜອງຂໍ້ມູນ ຂ່າວສານ ແລະ ຝຶກອົບຮົມໃຫ້ຄວາມຮູ້ກ່ຽວກັບຄວາມປອດໄພແຮງງານ ແກ່ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນໆ;

12. ສ້າງແຫຼ່ງລາຍຮັບທີ່ຖືກຕ້ອງຕາມກົດໝາຍ, ຄຸ້ມຄອງ ແລະ ນຳໃຊ້ລາຍຮັບນັ້ນ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານກຳມະບານ;

13. ເຂົ້າຮ່ວມໃນການຕິດຕາມ, ກວດກາ ການເຄື່ອນໄຫວວຽກງານ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກສະພາດັ່ງກ່າວ;

14. ພົວພັນ ແລະ ຮ່ວມມື ກັບອົງການຈັດຕັ້ງກຳມະບານປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ, ອົງການບໍ່ສັງກັດລັດຖະບານ ທັງພາຍໃນ ແລະ ຕ່າງປະເທດ;

15. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານກຳມະບານໃນຂອບເຂດທົ່ວປະເທດ ໃຫ້ຂັ້ນເທິງທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 13 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະຫະພັນກຳມະບານ ກະຊວງ, ອົງການ, ແຂວງ, ນະຄອນຫຼວງ**

ສະຫະພັນກຳມະບານກະຊວງ, ອົງການ, ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ເຊື່ອມຊຶມມະຕິ ຂອງຄະນະພັກ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ, ຂອງກະຊວງ, ອົງການ, ມະຕິກອງປະຊຸມກຳມະບານຂັ້ນເທິງ ເພື່ອສ້າງເປັນແຜນການ, ໂຄງການ, ກິດຈະກຳ ໃນແຕ່ລະໄລຍະ;

2. ສຶກສາອົບຮົມ, ໂຄສະນາ, ເຜີຍແຜ່ແນວທາງ, ນະໂຍບາຍ, ກົດໝາຍ, ມະຕິກອງປະຊຸມໃຫຍ່ ຂອງກຳມະບານລາວ ໃຫ້ແກ່ສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນ ຮັບຮູ້ເຊື່ອມຊຶມຢ່າງທົ່ວເຖິງ;

3. ເຕົ້າໂຮມຄວາມສາມັກຄີ, ປຸກລະດົມ ສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນ ເຂົ້າຮ່ວມຂະບວນການແຂ່ງຂັນ, ສ້າງເງື່ອນໄຂໃຫ້ເຂົາເຈົ້າໄດ້ຝຶກຝົນ ຫຼໍ່ຫຼອມຕົນເອງຢ່າງຮອບດ້ານ;

4. ສະເໜີສ້າງຕັ້ງ ຫຼື ຍຸບເລີກ ກົງຈັກຊ່ວຍວຽກຂັ້ນຂອງຕົນ; ສະເໜີສ້າງຕັ້ງ ຫຼື ຍຸບເລີກ ການຈັດຕັ້ງກຳມະບານຂັ້ນລຸ່ມຂອງຕົນ; ສ້າງ, ບຳລຸງ, ຍົກລະດັບທິດສະດີ, ວິຊາສະເພາະວຽກງານກຳມະບານ ໃຫ້ພະນັກງານກຳມະບານ;

5. ຮັບຮອງເອົາ ການແຕ່ງຕັ້ງຜູ້ຕາງໜ້າຜູ້ອອກແຮງງານ ຢູ່ຫົວໜ່ວຍແຮງງານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ເຂົ້າຮ່ວມກອງປະຊຸມປຶກສາຫາລື ແລະ ແກ້ໄຂບັນຫາ ທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກກຳມະບານ, ກຳມະກອນ ແລະ ຜູ້ອອກແຮງງານອື່ນ ຕາມກົນໄກການປະສານງານສາມຝ່າຍ;

7. ເກັບກຳສະຖິຕິ ແລະ ອອກບັດໃຫ້ສະມາຊິກກຳມະບານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

8. ຕິດຕາມ ສະພາບແວດລ້ອມການອອກແຮງງານ, ຮັບຟັງຄຳຄິດ ຄຳເຫັນ, ຄວາມມຸ່ງມາດປາຖະໜາ ແລະ ຕາງໜ້າກຳມະກອນ, ຜູ້ອອກແຮງງານ ສ້າງສັນຍາແຮງງານລວມໝູ່ ຢູ່ຫົວໜ່ວຍແຮງງານຂັ້ນຂອງຕົນ;

9. ຂົນຂວາຍ ແລະ ຊຸກຍູ້ ຈັດຕັ້ງກຳມະບານຮາກຖານ ຢູ່ກຸ່ມການຜະລິດ, ກຸ່ມວິຊາຊີບ ໃຫ້ແກ່ແຮງງານນອກລະບົບ;

10. ປະກອບສ່ວນຊຸກຍູ້, ສົ່ງເສີມ ການຝຶກອົບຮົມ ພັດທະນາສີມືແຮງງານ, ສະໜອງຂໍ້ມູນ ຂ່າວສານ ແລະ ຝຶກອົບຮົມ ໃຫ້ຄວາມຮູ້ກ່ຽວກັບຄວາມປອດໄພແຮງງານ ແກ່ຊາວຜູ້ອອກແຮງງານອື່ນໆ;

11. ສ້າງແຫຼ່ງລາຍຮັບທີ່ຖືກຕ້ອງຕາມກົດໝາຍ, ຄຸ້ມຄອງ ແລະ ນຳໃຊ້ລາຍຮັບນັ້ນ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານກຳມະບານ;

12. ເຂົ້າຮ່ວມໃນການຕິດຕາມ, ກວດກາ ການເຄື່ອນໄຫວວຽກງານ ຂອງສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກຂອງສະພາດັ່ງກ່າວ;

13. ພົວພັນ ແລະ ຮ່ວມມື ກັບອົງການຈັດຕັ້ງກຳມະບານປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ, ອົງການບໍ່ສັງກັດລັດຖະບານ ທັງພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງຂອງຂັ້ນເທິງ;

14. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານຂອງຕົນ ໃຫ້ຂັ້ນເທິງທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 14 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະຫະພັນກຳມະບານ ເມືອງ, ເທດສະບານ, ນະຄອນ, ສະຖາບັນການສຶກສາໃຫຍ່, ໂຮງງານໃຫຍ່ ແລະ ກຸ່ມບໍລິສັດໃຫຍ່**

ສະຫະພັນກຳມະບານ ເມືອງ, ເທດສະບານ, ນະຄອນ, ສະຖາບັນການສຶກສາໃຫຍ່, ໂຮງງານໃຫຍ່, ກຸ່ມບໍລິສັດໃຫຍ່ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ ເຊື່ອມຊຶມມະຕິຂອງຄະນະພັກ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ, ຂອງກະຊວງ, ອົງການ, ມະຕິກອງປະຊຸມກຳມະບານຂັ້ນເທິງ ເພື່ອສ້າງເປັນແຜນການ, ໂຄງການ, ກິດຈະກຳ ໃນແຕ່ລະໄລຍະ;

2. ສຶກສາອົບຮົມ, ໂຄສະນາ, ເຜີຍແຜ່ແນວທາງ, ນະໂຍບາຍ, ກົດໝາຍ, ມະຕິກອງປະຊຸມໃຫຍ່ ຂອງກຳມະບານລາວ ໃຫ້ແກ່ສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນຮັບຮູ້ເຊື່ອມຊຶມຢ່າງທົ່ວເຖິງ;

3. ເຕົ້າໂຮມຄວາມສາມັກຄີ, ປຸກລະດົມ ສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນ ເຂົ້າຮ່ວມຂະບວນການແຂ່ງຂັນ, ສ້າງເງື່ອນໄຂໃຫ້ເຂົາເຈົ້າໄດ້ຝຶກຝົນ ຫຼໍ່ຫຼອມຕົນເອງ ຢ່າງຮອບດ້ານ;

4. ສະເໜີສ້າງຕັ້ງ ຫຼື ຍຸບເລີກກົງຈັກຊ່ວຍວຽກຂັ້ນຂອງຕົນ; ສະເໜີສ້າງຕັ້ງ ຫຼື ຍຸບເລີກ ການຈັດຕັ້ງກຳມະບານຂັ້ນລຸ່ມຂອງຕົນ; ສ້າງ, ບຳລຸງ, ຍົກລະດັບທິດສະດີ, ວິຊາສະເພາະວຽກງານກຳມະບານ ໃຫ້ພະນັກງານກຳມະບານ;

5. ຮັບຮອງເອົາ ການແຕ່ງຕັ້ງຜູ້ຕາງໜ້າຜູ້ອອກແຮງງານຢູ່ຫົວໜ່ວຍແຮງງານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ເກັບກຳສະຖິຕິ ແລະ ອອກບັດໃຫ້ສະມາຊິກກຳມະບານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ຕິດຕາມ ສະພາບແວດລ້ອມການອອກແຮງງານ, ຮັບຟັງຄຳຄິດຄຳເຫັນ, ຄວາມມຸ່ງມາດປາຖະໜາ ແລະ ຕາງໜ້າກຳມະກອນ, ຜູ້ອອກແຮງງານ ສ້າງສັນຍາແຮງງານລວມໝູ່ ຢູ່ຫົວໜ່ວຍແຮງງານຂັ້ນຂອງຕົນ;

8. ເຂົ້າຮ່ວມກອງປະຊຸມປຶກສາຫາລື ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອແກ້ໄຂຂໍ້ຂັດແຍ່ງທາງດ້ານສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນໆ;

9. ຂົນຂວາຍ ແລະ ຊຸກຍູ້ ຈັດຕັ້ງກຳມະບານຮາກຖານ ຢູ່ກຸ່ມການຜະລິດ, ກຸ່ມວິຊາຊີບໃຫ້ແກ່ແຮງງານນອກລະບົບ;

10. ຝຶກອົບຮົມ ໃຫ້ຄວາມຮູ້ກ່ຽວກັບວຽກງານກຳມະບານ, ປະກອບສ່ວນວຽກງານ ຝຶກອົບຮົມພັດທະນາສີມືແຮງງານ, ສະໜອງຂໍ້ມູນ ຂ່າວສານ ແລະ ຄວາມປອດໄພແຮງງານ ແກ່ສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນໆ;

11. ສ້າງແຫຼ່ງລາຍຮັບທີ່ຖືກຕ້ອງຕາມກົດໝາຍ, ຄຸ້ມຄອງ ແລະ ນຳໃຊ້ລາຍຮັບນັ້ນ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານກຳມະບານ;

12. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານຂອງຕົນ ໃຫ້ຂັ້ນເທິງທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 15 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກຳມະບານຮາກຖານ**

ກຳມະບານຮາກຖານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ, ປຸກລະດົມສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນ ຢູ່ຫົວໜ່ວຍແຮງງານ ປະຕິບັດແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ກົດລະບຽບຂອງຫົວໜ່ວຍແຮງງານ;

2. ສະເໜີສ້າງ, ປັບປຸງ ການຈັດຕັ້ງ, ຂະຫຍາຍສະມາຊິກກຳມະບານ ແລະ ນຳພາສະມາຊິກກຳມະບານ ຈັດຕັ້ງປະຕິບັດລະບອບຮ່ວມຊີວິດ, ເສຍເງິນບຳລຸງ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບ ຂອງສະຫະພັນກຳມະບານລາວ;

3. ຕາງໜ້າກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນ ດຳເນີນການຕໍ່ລອງລວມໝູ່, ສ້າງສັນຍາແຮງງານລວມໝູ່ ແລະ ປະກອບຄຳເຫັນຕໍ່ການສ້າງ ແລະ ປັບປຸງກົດລະບຽບພາຍໃນ ຂອງຫົວໜ່ວຍແຮງງານ;

4. ຈັດຕັ້ງ ແລະ ນຳພາຂະບວນການແຂ່ງຂັນ ຂອງສະຫະພັນກຳມະບານລາວ ຕິດພັນກັບການປະຕິບັດໜ້າທີ່ວິຊາສະເພາະ, ປະຕິບັດແຜນການ ຂອງຫົວໜ່ວຍແຮງງານໃນແຕ່ລະໄລຍະ ດ້ວຍຮູບການ ແລະ ວິທີການທີ່ເໝາະສົມ;

5. ເກັບກຳສະຖິຕິ ແລະ ຄຸ້ມຄອງບັດສະມາຊິກກຳມະບານ ໃນຫົວໜ່ວຍແຮງງານຂອງຕົນ;

6. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຕິດຕາມ, ກວດກາ, ຊຸກຍູ້ການປະຕິບັດນະໂຍບາຍ, ສະຫວັດດີການສັງຄົມ, ຄ່າແຮງງານຂັ້ນຕ່ຳ ຕໍ່ສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນໆ;

7. ປະກອບສ່ວນ ສະໜອງຂໍ້ມູນ ແລະ ອົບຮົມຄວາມປອດໄພແຮງງານ ໃຫ້ແກ່ສະມາຊິກກຳມະບານ, ກຳມະກອນ ແລະ ຜູ້ອອກແຮງງານ ຢູ່ຫົວໜ່ວຍແຮງງານ;

8. ເປັນຕົວແທນ ເຂົ້າຮ່ວມໃນການໄກ່ເກ່ຍ ປະນີປະນອມ, ແກ້ໄຂຂໍ້ຂັດແຍ່ງທາງດ້ານສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກກຳມະບານ, ກຳມະກອນ ແລະ ຜູ້ອອກແຮງງານ ຢູ່ຫົວໜ່ວຍແຮງງານ;

9. ສະຫຼຸບ, ລາຍງານວຽກງານຂອງຕົນ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ໂຄງປະກອບຄະນະບໍລິຫານງານ

**ມາດຕາ 16 (ປັບປຸງ) ໂຄງປະກອບຄະນະບໍລິຫານງານ ຂອງສະຫະພັນກຳມະບານລາວ**

ຄະນະບໍລິຫານງານ ຂອງສະຫະພັນກຳມະບານແຕ່ລະຂັ້ນ ປະກອບດ້ວຍ:

- ປະທານ ຄະນະບໍລິຫານງານ;
- ຮອງປະທານ ຄະນະບໍລິຫານງານ;
- ປະທານກວດກາ ຂອງຄະນະບໍລິຫານງານ;
- ກຳມະການ ຄະນະບໍລິຫານງານ.

ຄະນະບໍລິຫານງານສະຫະພັນກຳມະບານລາວ ແມ່ນ ພະນັກງານກຳມະບານອາຊີບ ແລະ ເຄິ່ງອາຊີບ ທີ່ໄດ້ມາຈາກການເລືອກຕັ້ງ ຂອງກອງປະຊຸມໃຫຍ່ແຕ່ລະຂັ້ນ. ໃນກໍລະນີມີຄວາມຈຳເປັນ ກອງປະຊຸມຄົບຄະ

ນະບໍລິຫານງານ ຈະເປັນຜູ້ຮັບຮອງເອົາ ຕາມການແຕ່ງຕັ້ງ ຈາກຄະນະພັກ ຫຼື ຄະນະປົກຄອງ ບ່ອນຜູ້ກ່ຽວສັງກັດຢູ່.

**ມາດຕາ 17 (ປັບປຸງ) ສິດ ແລະ ໜ້າທີ່ ຂອງປະທານຄະນະບໍລິຫານງານ**

ປະທານ ຄະນະບໍລິຫານງານສະຫະພັນກຳມະບານແຕ່ລະຂັ້ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ, ນຳພາໂດຍກົງ ໃນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ; ຕົກລົງຮັບຮອງບັນດາແຜນງານ, ໂຄງການເຄື່ອນໄຫວຮອບດ້ານ ໃນລະຫວ່າງສອງສະໄໝກອງປະຊຸມໃຫຍ່;

2. ຕົກລົງບັນຫາສຳຄັນໃນວຽກງານ ຂອງສະຫະພັນກຳມະບານລາວ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ບົນພື້ນຖານຄວາມເປັນເອກະພາບຂອງໝູ່ຄະນະ;

3. ປະສານສົມທົບ, ປຶກສາຫາລືວຽກງານກຳມະບານລາວ ແລະ ວຽກງານອື່ນທີ່ສຳຄັນ ກັບອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນອື່ນຂັ້ນຂອງຕົນ ທີ່ເຫັນວ່າມີຄວາມຈຳເປັນ;

4. ຕົກລົງ, ຮຽກໂຮມ ທັງເປັນປະທານກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ;

5. ຊຸກຍູ້, ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານພາຍໃນ ແລະ ຕ່າງປະເທດ ຂອງສະຫະພັນກຳມະບານຂັ້ນຂອງຕົນ;

6. ປະກອບຄຳຄິດ ຄຳເຫັນນຳການຈັດຕັ້ງພັກ, ລັດທີ່ກ່ຽວຂ້ອງ ໃນການປະຕິບັດນະໂຍບາຍຕໍ່ສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນ ເປັນຕົ້ນ ການບຳລຸງ, ສ້າງ, ການເລື່ອນຊັ້ນຕຳແໜ່ງ, ການປ່ຽນແປງຊັ້ນ ຂັ້ນເງິນເດືອນ, ການຍ້ອງຍໍ ຫຼື ລົງວິໄນ ແລະ ນະໂຍບາຍອື່ນ ທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດອັນຊອບທຳຂອງເຂົາເຈົ້າ;

7. ສະຫຼຸບ, ລາຍງານສະພາບຮອບດ້ານ ຂອງວຽກງານກຳມະບານ ໃຫ້ຄະນະບໍລິຫານງານ ແລະ ໃຫ້ຂັ້ນເທິງຖັດຕົນ ເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 18 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຮອງປະທານຄະນະບໍລິຫານງານ**

ຮອງປະທານຄະນະບໍລິຫານງານສະຫະພັນກຳມະບານແຕ່ລະຂັ້ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບ ລົງເລິກຊີ້ນຳ, ນຳພາວຽກງານຈຳນວນໜຶ່ງ ຕາມການມອບໝາຍ ຂອງປະທານຄະນະບໍລິຫານງານສະຫະພັນກຳມະບານຂັ້ນຂອງຕົນ;

2. ໃຫ້ຄຳປຶກສາ, ປະກອບຄຳຄິດ ຄຳເຫັນຊ່ວຍປະທານຄະນະບໍລິຫານງານສະຫະພັນກຳມະບານຂັ້ນຂອງຕົນ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານກຳມະບານ ຫຼື ວຽກງານອື່ນທີ່ກ່ຽວຂ້ອງ;

3. ຮັກສາການແທນ ປະທານຄະນະບໍລິຫານງານສະຫະພັນກຳມະບານຂັ້ນຂອງຕົນ ໃນເວລາປະທານ ຕິດຂັດ ຫຼື ຕາມການມອບໝາຍ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 19 (ໃໝ່) ສິດ ແລະ ໜ້າທີ່ ຂອງກຳມະການຄະນະບໍລິຫານງານ**

ກຳມະການຄະນະບໍລິຫານງານສະຫະພັນກຳມະບານລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບ ລົງເລິກວຽກງານໃດໜຶ່ງ ຕາມການມອບໝາຍ ຂອງຄະນະບໍລິຫານງານຂັ້ນຂອງຕົນ;

2. ເຂົ້າຮ່ວມກອງປະຊຸມ, ປຶກສາຫາລື, ປະກອບຄຳເຫັນ ແລະ ລົງຄະແນນສຽງ ຮັບຮອງເອົາບັນຫາສຳຄັນຕ່າງໆ ກ່ຽວກັບວຽກງານກຳມະບານຂັ້ນຂອງຕົນ ແລະ ຂັ້ນລຸ່ມຂອງຕົນ;

3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 4
## ສະມາຊິກກຳມະບານ

**ມາດຕາ 20 (ປັບປຸງ) ສະມາຊິກກຳມະບານ**

ສະມາຊິກກຳມະບານ ແມ່ນ ບຸກຄົນ ທີ່ເປັນພະນັກງານ-ລັດຖະກອນ, ນັກສຶກສາ, ປັນຍາຊົນ ຢູ່ໃນການຈັດຕັ້ງຂອງ ພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ກຳມະກອນ, ຊາວຜູ້ອອກແຮງງານອື່ນ ຢູ່ຫົວໜ່ວຍແຮງງານ ທີ່ໄດ້ຮັບເຂົ້າ ແລະ ຂຶ້ນທະບຽນ ເປັນສະມາຊິກກຳມະບານ.

ສຳລັບວິທີການ ແລະ ຂັ້ນຕອນ ຮັບເຂົ້າເປັນສະມາຊິກກຳມະບານ ໄດ້ກຳນົດໄວ້ໃນກົດລະບຽບຂອງສະຫະພັນກຳມະບານລາວ.

**ມາດຕາ 21 (ປັບປຸງ) ມາດຕະຖານ ແລະ ເງື່ອນໄຂພື້ນຖານ ຂອງສະມາຊິກກຳມະບານ**

ສະມາຊິກກຳມະບານ ມີມາດຕະຖານ ແລະ ເງື່ອນໄຂພື້ນຖານ ດັ່ງນີ້:

1. ເປັນພະນັກງານ, ລັດຖະກອນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານອື່ນ ທັງໃນ ແລະ ນອກລະບົບ ໂດຍບໍ່ຈຳແນກເພດ, ຊົນເຜົ່າ, ລະດັບການສຶກສາ, ການເຊື່ອຖື, ຖານະທາງດ້ານເສດຖະກິດ-ສັງຄົມ, ຖືສັນຊາດລາວ ທີ່ມີອາຍຸ 18 ປີ ຂຶ້ນໄປ;

2. ມີສະຕິຕື່ນຕົວ ປະຕິບັດກົດໝາຍ, ກົດລະບຽບ ຂອງຫົວໜ່ວຍແຮງງານ, ເຫັນດີ ເຫັນພ້ອມປະຕິບັດກົດລະບຽບ ຂອງສະຫະພັນກຳມະບານລາວ ແລະ ເຂົ້າຮ່ວມການເຄື່ອນໄຫວວຽກງານກຳມະບານ;

3. ຕ້ອງເປັນຜູ້ທີ່ມີຄຸນສົມບັດ ສິນທຳປະຕິວັດ, ໄດ້ຜ່ານການຝຶກຝົນ ຫຼໍ່ຫຼອມໃນຂະບວນການວຽກງານຕົວຈິງ, ມີຄວາມຫ້າວຫັນ, ເປັນແບບຢ່າງທີ່ດີ ແລະ ມີຄວາມຮັບຜິດຊອບໃນໜ້າທີ່ວຽກງານ;

4. ມີຄວາມສະໝັກໃຈ ເຂົ້າເປັນສະມາຊິກກຳມະບານ ດ້ວຍຕົນເອງ.

**ມາດຕາ 22 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະມາຊິກກຳມະບານ**

ສະມາຊິກກຳມະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາຂົນຂວາຍ ແລະ ເປັນແບບຢ່າງທີ່ດີໃຫ້ກຳມະກອນ, ຊາວຜູ້ອອກແຮງງານອື່ນ ໃນການປະຕິບັດແນວທາງນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍຂອງລັດ; ປະຕິບັດກົດລະບຽບ ຂອງສະຫະພັນກຳມະບານລາວ ແລະ ກົດລະບຽບພາຍໃນຂອງຫົວໜ່ວຍແຮງງານ ຢ່າງຖືກຕ້ອງ ແລະ ເຂັ້ມງວດ;

2. ເປັນເຈົ້າການເຄື່ອນໄຫວວຽກງານກຳມະບານ, ເຂົ້າຮ່ວມຊີວິດການເມືອງໃນກຳມະບານຮາກຖານ, ເສຍເງິນບຳລຸງຕາມກຳນົດໄວ້ຢູ່ໃນກົດລະບຽບ ຂອງສະຫະພັນກຳມະບານລາວ;

3. ເຂົ້າຮ່ວມ ການເຄື່ອນໄຫວວຽກງານຂອງອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງສັງຄົມ ທີ່ຖືກຕ້ອງຕາມກົດໝາຍ;

4. ຕິດຕາມ ກວດກາ, ປຶກສາຫາລື, ສະເໜີ, ປະກອບຄຳຄິດ ຄຳເຫັນກ່ຽວກັບວຽກງານກຳມະບານ ແລະ ວຽກງານອື່ນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ໄດ້ຮັບຂໍ້ມູນ ຂ່າວສານທີ່ຈຳເປັນ, ໄດ້ຮັບການຍົກລະດັບຄວາມຮູ້, ຄວາມສາມາດ;

6. ເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ເຂົ້າໃນຕຳແໜ່ງນຳພາຂອງສະຫະພັນກຳມະບານລາວທຸກຂັ້ນ, ລົງຄະແນນສຽງ ເພື່ອຕົກລົງວຽກງານສຳຄັນ ຢູ່ໃນກອງປະຊຸມກຳມະບານຂັ້ນຂອງຕົນ;

7. ສະເໜີໃຫ້ສະຫະພັນກຳມະບານລາວ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນໃນເມື່ອຖືກລະເມີດ;

8. ໄດ້ຮັບນະໂຍບາຍເບິ່ງແຍງ ຊ່ວຍເຫຼືອໃນເວລາເຈັບເປັນ ແລະ ພົບຄວາມຫຍຸ້ງຍາກ ຈາກສະຫະພັນກຳມະບານຂັ້ນຂອງຕົນ ຕາມລະບຽບການ;

9. ເຂົ້າຮ່ວມການປັບປຸງ, ກໍ່ສ້າງການຈັດຕັ້ງກຳມະບານຂັ້ນຂອງຕົນ, ໂຄສະນາຂົນຂວາຍມະຫາຊົນ ເຂົ້າເປັນສະມາຊິກກຳມະບານ;

10. ຝຶກຝົນ ຫຼໍ່ຫຼອມຕົນເອງໃຫ້ກາຍເປັນພົນລະເມືອງດີ, ເປັນສະມາຊິກກຳມະບານທີ່ມີຄວາມຮູ້, ມີຄວາມສາມາດ ແລະ ປະຕິບັດລະບຽບວິໄນດີ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 23 (ປັບປຸງ) ຜົນປະໂຫຍດ ຂອງສະມາຊິກກຳມະບານ**

ຜົນປະໂຫຍດຕົ້ນຕໍ ຂອງສະມາຊິກກຳມະບານ ມີ ດັ່ງນີ້:

1. ໄດ້ຮັບການຍົກລະດັບ, ການບັນຈຸ, ສັບຊ້ອນ ເຂົ້າໃນຕຳແໜ່ງງານ ຂອງອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ຫົວໜ່ວຍແຮງງານ ຢ່າງເໝາະສົມ ຕາມລະບຽບການ;

2. ໄດ້ຮັບການບໍລິການຂໍ້ມູນ ຂ່າວສານ ກ່ຽວກັບການອອກແຮງງານ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;

3. ໄດ້ຮັບການຊ່ວຍເຫຼືອ ໃນການແກ້ໄຂຂໍ້ຂັດແຍ່ງດ້ານສິດ ແລະ ຜົນປະໂຫຍດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

4. ເຂົ້າຮ່ວມກິດຈະກຳ ການເຄື່ອນໄຫວວຽກງານຕ່າງໆ ທີ່ອົງການກຳມະບານຈັດຂຶ້ນ;

5. ໄດ້ຮັບຜົນປະໂຫຍດ, ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 5
## ການສ້າງຕັ້ງການຈັດຕັ້ງ ແລະ ການຂະຫຍາຍສະມາຊິກກຳມະບານ

**ມາດຕາ 24 (ໃໝ່) ການສ້າງຕັ້ງ ການຈັດຕັ້ງກຳມະບານ ຢູ່ຫົວໜ່ວຍແຮງງານ**

ຫົວໜ່ວຍແຮງງານ, ກຸ່ມການຜະລິດທີ່ມີກຳມະກອນ ແລະ ຜູ້ອອກແຮງງານ ແຕ່ສິບຄົນຂຶ້ນໄປ ສາມາດສ້າງຕັ້ງການຈັດຕັ້ງກຳມະບານ. ໃນກໍລະນີ ບໍ່ສາມາດສ້າງຕັ້ງກຳມະບານຮາກຖານໄດ້ ກໍໃຫ້ຜູ້ອອກແຮງງານຄັດເລືອກຜູ້ຕາງໜ້າຂອງຕົນເປັນການຊົ່ວຄາວ ໂດຍແມ່ນຄະນະສະຫະພັນກຳມະບານ ຂອງກົມກອງ ຫຼື

ການຈັດຕັ້ງ ທີ່ຫົວໜ່ວຍແຮງງານນັ້ນຂຶ້ນກັບ ເປັນຜູ້ແນະນຳ, ຮັບຮອງຕາມກົດໝາຍ ແລະ ກົດລະບຽບ ຂອງສະຫະພັນກຳມະບານລາວ.

**ມາດຕາ 25 (ໃໝ່) ການຂະຫຍາຍສະມາຊິກກຳມະບານ ຢູ່ຫົວໜ່ວຍແຮງງານ**

ການຂະຫຍາຍສະມາຊິກກຳມະບານ ໃນຫົວໜ່ວຍແຮງງານ ແລະ ກຸ່ມການຜະລິດ ທີ່ບໍ່ທັນມີການຈັດຕັ້ງກຳມະບານ ແມ່ນສະຫະພັນກຳມະບານ ຂອງກົມກອງ, ການຈັດຕັ້ງທີ່ຫົວໜ່ວຍແຮງງານນັ້ນ ຂຶ້ນກັບ ຫຼື ຜູ້ຕາງໜ້າຜູ້ອອກແຮງງານຫົວໜ່ວຍແຮງງານນັ້ນ ເປັນຜູ້ໂຄສະນາຂົນຂວາຍຜູ້ອອກແຮງງານ ໃຫ້ເຂົ້າເປັນສະມາຊິກກຳມະບານ.

## ໝວດທີ 6
## ຜູ້ຕາງໜ້າຜູ້ອອກແຮງງານ

**ມາດຕາ 26 (ໃໝ່) ຜູ້ຕາງໜ້າຜູ້ອອກແຮງງານ**

ຜູ້ຕາງໜ້າຜູ້ອອກແຮງງານ ແມ່ນ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບການຄັດເລືອກໂດຍກຳມະກອນ ແລະ ຜູ້ອອກແຮງງານຢູ່ຫົວໜ່ວຍແຮງງານ ໃຫ້ເປັນຕົວແທນປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້.

ຜູ້ຕາງໜ້າຜູ້ອອກແຮງງານ ຕ້ອງໄດ້ຖືກຮັບຮອງຈາກສະຫະພັນກຳມະບານ ຂອງກົມກອງ ຫຼື ການຈັດຕັ້ງທີ່ຫົວໜ່ວຍແຮງງານນັ້ນຂຶ້ນກັບ ພາຍໃນ ສິບຫ້າວັນ. ຜູ້ຕາງໜ້າຜູ້ອອກແຮງງານຈະສິ້ນສຸດໜ້າທີ່ ໃນເມື່ອຢູ່ຫົວໜ່ວຍແຮງງານນັ້ນ ໄດ້ສ້າງຕັ້ງການຈັດຕັ້ງກຳມະບານຂຶ້ນ.

**ມາດຕາ 27 (ໃໝ່) ສິດ ແລະ ໜ້າທີ່ ຂອງຜູ້ຕາງໜ້າຜູ້ອອກແຮງງານລາວ**

ຜູ້ຕາງໜ້າຜູ້ອອກແຮງງານ ມີ ສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມ ແລະ ປຸກລະດົມ ກຳມະກອນ ແລະ ຜູ້ອອກແຮງງານຕັ້ງໜ້າປະຕິບັດວຽກງານວິຊາສະເພາະ ແລະ ມີວິໄນການອອກແຮງງານ;
2. ເຂົ້າຮ່ວມໃນການຕໍ່ລອງລວມໝູ່, ຕາງໜ້າກຳມະກອນ, ຜູ້ອອກແຮງງານສ້າງສັນຍາແຮງງານລວມໝູ່ ແລະ ປະກອບຄຳເຫັນຕໍ່ກັບການສ້າງ, ການປັບປຸງກົດລະບຽບພາຍໃນ ຂອງຫົວໜ່ວຍແຮງງານ;
3. ໄກ່ເກ່ຍ ແກ້ໄຂຂໍ້ຂັດແຍ່ງແບບປະນີປະນອມ; ກໍລະນີບໍ່ສາມາດໄກ່ເກ່ຍແກ້ໄຂຂໍ້ຂັດແຍ່ງນັ້ນໄດ້ ຜູ້ຕາງໜ້າຜູ້ອອກແຮງງານ ມີສິດລາຍງານໃຫ້ການຈັດຕັ້ງກຳມະບານຂັ້ນເທິງ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຮັບຊາບ ຜົນຂອງການໄກ່ເກ່ຍ;
4. ຕິດຕາມ ການປະຕິບັດລະດັບຄ່າແຮງງານຂັ້ນຕ່ຳ, ເງື່ອນໄຂສະພາບແວດລ້ອມການອອກແຮງງານ ແລະ ການປະຕິບັດລະບອບປະກັນສັງຄົມ ຕໍ່ກຳມະກອນ ແລະ ຜູ້ອອກແຮງງານອື່ນ ຢູ່ຫົວໜ່ວຍແຮງງານຂອງຕົນ;
5. ດຳເນີນການຂົນຂວາຍ ສ້າງຕັ້ງກຳມະບານຮາກຖານ ຢູ່ຫົວໜ່ວຍແຮງງານຂອງຕົນ;
6. ໄດ້ຮັບການປົກປ້ອງ ຕາມກົດໝາຍ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ III
## ກອງປະຊຸມ ຂອງກຳມະບານລາວ

### ມາດຕາ 28 ປະເພດກອງປະຊຸມ ຂອງກຳມະບານລາວ

ກອງປະຊຸມ ຂອງກຳມະບານລາວ ມີ ສາມ ປະເພດ ດັ່ງນີ້:

1. ກອງປະຊຸມໃຫຍ່;
2. ກອງປະຊຸມສາມັນ;
3. ກອງປະຊຸມວິສາມັນ.

### ມາດຕາ 29 (ປັບປຸງ) ກອງປະຊຸມໃຫຍ່

ກອງປະຊຸມໃຫຍ່ ຂອງກຳມະບານລາວ ລວມມີ ກອງປະຊຸມໃຫຍ່ຜູ້ແທນ ແລະ ກອງປະຊຸມໃຫຍ່ສະມາຊິກ.

ກອງປະຊຸມໃຫຍ່ຜູ້ແທນ ແມ່ນ ກອງປະຊຸມຕົວແທນສະມາຊິກກຳມະບານທົ່ວປະເທດ, ແຂວງ, ນະຄອນຫຼວງ, ກະຊວງ ຫຼື ອົງການ, ເມືອງ, ເທດສະບານ, ນະຄອນ ຊຶ່ງຫ້າປີໃດ ດຳເນີນເທື່ອໜຶ່ງ ໂດຍແມ່ນປະທານສະຫະພັນກຳມະບານຂັ້ນນັ້ນ ເປັນຜູ້ຮຽກໂຮມ; ກ່ອນຈະເປີດກອງປະຊຸມໃຫຍ່ຜູ້ແທນນັ້ນ ປະ ທານສະຫະພັນກຳມະບານລາວ ຕ້ອງໄດ້ແຈ້ງໄປຍັງກຳມະການ ໃນຄະນະບໍລິຫານງານສະຫະພັນກຳມະບານລາວຂັ້ນຂອງຕົນ ແລະ ຂັ້ນລຸ່ມຮັບຊາບກ່ອນລ່ວງໜ້າ ຫົກເດືອນ.

ກອງປະຊຸມໃຫຍ່ສະມາຊິກກຳມະບານ ແມ່ນ ກອງປະຊຸມໃຫຍ່ກຳມະບານຮາກຖານ ຊຶ່ງຫ້າປີໃດດຳເນີນເທື່ອໜຶ່ງ ໂດຍແມ່ນປະທານກຳມະບານຮາກຖານນັ້ນ ເປັນຜູ້ຮຽກໂຮມ ແລະ ແຈ້ງໃຫ້ສະມາຊິກຮັບຊາບກ່ອນລ່ວງໜ້າ ສາມເດືອນ.

ກໍລະນີມີຄວາມຈຳເປັນ ກອງປະຊຸມໃຫຍ່ສາມາດເປີດຂຶ້ນໄວ ຫຼື ຊ້າກວ່າເວລາທີ່ກຳນົດໄວ້ກໍໄດ້ ແຕ່ຕ້ອງບໍ່ເກີນ ຫົກເດືອນ ພ້ອມທັງລາຍງານເຫດຜົນນັ້ນ ໃຫ້ສະຫະພັນກຳມະບານລາວຂັ້ນເທິງ ແລະ ແຈ້ງໃຫ້ຄະນະບໍລິຫານງານສະຫະພັນກຳມະບານຂັ້ນຂອງຕົນ, ຂັ້ນລຸ່ມຂອງຕົນຮັບຊາບກ່ອນ ສອງເດືອນ.

### ມາດຕາ 30 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກອງປະຊຸມໃຫຍ່

ກອງປະຊຸມໃຫຍ່ ມີສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຄົ້ນຄ້ວາ ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການເມືອງ ຂອງຄະນະບໍລິຫານງານສະຫະພັນກຳມະບານລາວຕະຫຼອດໄລຍະການນຳພາຂອງຕົນ;
2. ຮັບຮອງ ແຜນຍຸດທະສາດພັດທະນາວຽກງານກຳມະບານ ໄລຍະສັ້ນ, ໄລຍະຍາວ ຂັ້ນຂອງຕົນ;
3. ສຳລັບກອງປະຊຸມໃຫຍ່ຜູ້ແທນກຳມະບານທົ່ວປະເທດ ແມ່ນຄົ້ນຄວ້າ ພິຈາລະນາຮັບຮອງເອົາການປັບປຸງເນື້ອໃນຂໍ້ແຂ່ງຂັນ ແລະ ການປັບປຸງກົດລະບຽບ ຂອງສະຫະພັນກຳມະບານລາວ;
4. ດຳເນີນຊີວິດການເມືອງ ຂອງຄະນະບໍລິຫານງານສະຫະພັນກຳມະບານ ຂັ້ນຂອງຕົນ;
5. ເລືອກຕັ້ງ ຄະນະບໍລິຫານງານສະຫະພັນກຳມະບານ ແລະ ເລືອກເອົາຜູ້ແທນຂັ້ນຂອງຕົນ ໄປຮ່ວມກອງປະຊຸມໃຫຍ່ຂັ້ນເທິງຖັດຕົນ;

6. ພິຈາລະນາ ຮັບຮອງເອົາຜົນຂອງກອງປະຊຸມຄົບຄະນະບໍລິຫານງານຄັ້ງປະຖົມມະລືກ ກ່ຽວກັບການເລືອກຕັ້ງເອົາປະທານ, ຮອງປະທານຄະນະບໍລິຫານງານ ແລະ ປະທານກວດກາວຽກງານກຳມະບານຂັ້ນຂອງຕົນ;

7. ຮັບຮອງເອົາມະຕິກອງປະຊຸມໃຫຍ່ ສະຫະພັນກຳມະບານລາວຂັ້ນຂອງຕົນ.

## ມາດຕາ 31 ກອງປະຊຸມສາມັນ

ກອງປະຊຸມສາມັນຄົບຄະນະບໍລິຫານງານສະຫະພັນກຳມະບານລາວ ເປີດຂຶ້ນປີລະໜຶ່ງເທື່ອ ໂດຍແມ່ນປະທານສະຫະພັນກຳມະບານຂັ້ນນັ້ນ ເປັນຜູ້ຮຽກໂຮມ. ກ່ອນຈະເປີດກອງປະຊຸມຄົບຄະນະປະຈຳປີນັ້ນ ປະທານ ຕ້ອງໄດ້ແຈ້ງໄປຍັງຄະນະບໍລິຫານງານຂັ້ນຂອງຕົນ ແລະ ສະຫະພັນກຳມະບານຂັ້ນລຸ່ມ ຮັບຊາບກ່ອນສາມເດືອນ. ກອງປະຊຸມສາມັນ ຕ້ອງມີຄະນະບໍລິຫານງານເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຈຶ່ງສາມາດດຳເນີນກອງປະຊຸມໄດ້.

## ມາດຕາ 32 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກອງປະຊຸມສາມັນ

ກອງປະຊຸມສາມັນຄົບຄະນະບໍລິຫານງານສະຫະພັນກຳມະບານລາວ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຄົ້ນຄ້ວາ ແລະ ຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານ, ສະພາບເສດຖະກິດ, ການເງິນປະຈຳປີ ແລະ ທິດທາງໜ້າທີ່ວຽກງານ ປີຕໍ່ໜ້າ ຂອງສະຫະພັນກຳມະບານຂັ້ນຂອງຕົນ;

2. ຄົ້ນຄວ້າ ປະກອບຄຳເຫັນຕໍ່ເນື້ອໃນວຽກງານສຳຄັນ ຕາມການສະເໜີ ຫຼື ເຈາະຈີ້ມ ຂອງຄະນະປະທານ (ຖ້າມີ);

3. ດຳເນີນຊີວິດການເມືອງ ເພື່ອສຳຫຼວດການນຳພາວຽກງານປະຈຳປີ ຂອງຄະນະບໍລິຫານງານສະຫະພັນກຳມະບານ ຂັ້ນຂອງຕົນ;

4. ເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງເພີ່ມເຕີມ ຄະນະບໍລິຫານງານຂັ້ນຂອງຕົນ ທີ່ວ່າງລົງ;

5. ຕົກລົງ ບັນຫາສຳຄັນຕ່າງໆ ໃນການບໍລິຫານວຽກງານ ຂອງສະຫະພັນກຳມະບານ ຂັ້ນຂອງຕົນ;

6. ຮັບຮອງ ເອົາມະຕິກອງປະຊຸມຄົບຄະນະບໍລິຫານງານ ສະຫະພັນກຳມະບານ ຂັ້ນຂອງຕົນ.

## ມາດຕາ 33 ກອງປະຊຸມວິສາມັນ

ກອງປະຊຸມວິສາມັນ ແມ່ນ ກອງປະຊຸມທີ່ໄດ້ເປີດຂຶ້ນໃນລະຫວ່າງ ສອງກອງປະຊຸມສາມັນ ເພື່ອພິຈາລະນາບັນຫາສຳຄັນ, ຈຳເປັນ ແລະ ຮີບດ່ວນ ຕາມການສະເໜີ ຂອງຄະນະປະທານ ຫຼື ຢ່າງໜ້ອຍ ໜຶ່ງສ່ວນສີ່ ຂອງຄະນະບໍລິຫານງານ ໂດຍແມ່ນປະທານສະຫະພັນກຳມະບານຂັ້ນນັ້ນ ເປັນຜູ້ຮຽກໂຮມ ແລະ ມີຈຳນວນຄະນະບໍລິຫານງານ ເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຈຶ່ງສາມາດດຳເນີນກອງປະຊຸມວິສາມັນໄດ້.

## ມາດຕາ 34 ມະຕິກອງປະຊຸມ

ມະຕິກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ ແມ່ນ ການຮັບຮອງເອົາເນື້ອໃນຂອງກອງປະຊຸມດັ່ງກ່າວຈາກຜູ້ແທນກອງປະຊຸມ. ມະຕິກອງປະຊຸມນັ້ນ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງເຫັນດີ ຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ.

## ພາກທີ IV
## ຄວາມຮັບຜິດຊອບຂອງລັດ ແລະ ຫົວໜ່ວຍແຮງງານ ຕໍ່ວຽກງານກຳມະບານ

**ມາດຕາ 35 (ໃໝ່) ຄວາມຮັບຜິດຊອບຂອງລັດ ຕໍ່ວຽກງານກຳມະບານ**

ລັດ ມີຄວາມຮັບຜິດຊອບ ຕໍ່ວຽກງານກຳມະບານ ດັ່ງນີ້:

1. ສ້າງເງື່ອນໄຂ, ສົ່ງເສີມໃຫ້ການຈັດຕັ້ງກຳມະບານ ໄດ້ຮັບການສ້າງຕັ້ງຂຶ້ນ ແລະ ເຄື່ອນໄຫວວຽກງານ ຕາມພາລະບົດບາດ ແລະ ໜ້າທີ່ ຂອງຕົນ;
2. ເຄົາລົບ ລະບຽບ ແລະ ຫຼັກການເຄື່ອນໄຫວວຽກງານ ຂອງສະຫະພັນກຳມະບານລາວ;
3. ຮັບຮູ້ ຜົນການເລືອກຕັ້ງ ຄະນະບໍລິຫານງານສະຫະພັນກຳມະບານຂັ້ນຂອງຕົນ;
4. ເສີມຂະຫຍາຍບົດບາດ, ຫົວຄິດປະດິດສ້າງ, ຄວາມເປັນເຈົ້າການ ຂອງສະມາຊິກກຳມະບານ ໃນການປະກອບສ່ວນພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ຂອງຊາດ;
5. ອຳນວຍຄວາມສະດວກທີ່ຈຳເປັນ ໃນການປະຕິບັດໜ້າທີ່ ຂອງພະນັກງານທີ່ເຮັດວຽກງານກຳມະບານ ເປັນຕົ້ນ ງົບປະມານ, ສະຖານທີ່ເຮັດວຽກ, ຫ້ອງປະຊຸມ, ອຸປະກອນ, ພາຫະນະຮັບໃຊ້ ໃຫ້ແກ່ການເຄື່ອນໄຫວວຽກງານກຳມະບານຂັ້ນຂອງຕົນ.

**ມາດຕາ 36 (ໃໝ່) ຄວາມຮັບຜິດຊອບຂອງຫົວໜ່ວຍແຮງງານ ຕໍ່ວຽກງານກຳມະບານ**

ຫົວໜ່ວຍແຮງງານ ມີຄວາມຮັບຜິດຊອບ ຕໍ່ວຽກງານກຳມະບານ ດັ່ງນີ້:

1. ສ້າງເງື່ອນໄຂ, ສົ່ງເສີມໃຫ້ການຈັດຕັ້ງກຳມະບານໄດ້ຮັບການສ້າງຕັ້ງຂຶ້ນ ຢູ່ຫົວໜ່ວຍແຮງງານ ແລະ ເຄື່ອນໄຫວວຽກງານ ຕາມພາລະບົດບາດ ແລະ ໜ້າທີ່ ຂອງຕົນ;
2. ຮັບຮູ້ ຜົນການເລືອກຕັ້ງຄະນະບໍລິຫານງານສະຫະພັນກຳມະບານ ຫຼື ຜູ້ຕາງໜ້າຜູ້ອອກແຮງງານ ທີ່ໄດ້ຮັບການຄັດເລືອກໃນຂັ້ນຂອງຕົນ;
3. ສ້າງເງື່ອນໄຂ ໃຫ້ພະນັກງານກຳມະບານ ໄດ້ຄົ້ນຄວ້າຮ່ຳຮຽນ ຍົກລະດັບຄວາມຮູ້ ທາງດ້ານທິດສະດີ ແລະ ວິຊາສະເພາະ ເພື່ອພັດທະນາຕົນເອງ ຢ່າງຮອບດ້ານ;
4. ອະນຸຍາດ ໃຫ້ປະທານ, ຮອງປະທານ ທີ່ຮັບຜິດຊອບວຽກງານກຳມະບານ ໄດ້ໃຊ້ເວລາເຮັດວຽກງານກຳມະບານຕາມຄວາມເໝາະສົມ ໂດຍໄດ້ຮັບການເຫັນດີຈາກຜູ້ອຳນວຍການ ແລະ ໄດ້ຮັບຄ່າແຮງງານເຕັມຕາມປົກກະຕິ;
5. ອຳນວຍຄວາມສະດວກທີ່ຈຳເປັນ ໃນການປະຕິບັດໜ້າທີ່ ຂອງຜູ້ຮັບຜິດຊອບວຽກງານກຳມະບານ ເປັນຕົ້ນ ສະຖານທີ່ເຮັດວຽກ, ຫ້ອງປະຊຸມ, ອຸປະກອນ, ພາຫະນະຮັບໃຊ້ ໃຫ້ແກ່ການເຄື່ອນໄຫວວຽກງານກຳມະບານ ຂັ້ນຂອງຕົນ;
6. ເສີມຂະຫຍາຍບົດບາດ, ຫົວຄິດປະດິດສ້າງ, ຄວາມເປັນເຈົ້າການ ຂອງສະມາຊິກກຳມະບານ ໃນການປະກອບສ່ວນພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ຂອງຊາດ ແລະ ຂອງຫົວໜ່ວຍແຮງງານ.

## ພາກທີ V
## ວຽກງານການເງິນ ຂອງກຳມະບານລາວ

**ມາດຕາ 37 (ປັບປຸງ) ແຫຼ່ງລາຍຮັບ**

ແຫຼ່ງລາຍຮັບ ຂອງກຳມະບານລາວ ໄດ້ມາຈາກ:

1. ງົບປະມານຂອງລັດ;
2. ເງິນບຳລຸງ ຂອງສະມາຊິກກຳມະບານ;
3. ກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຂອງສະມາຊິກກຳມະບານ;
4. ການຊ່ວຍເຫຼືອຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
5. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 38 (ໃໝ່) ການຄຸ້ມຄອງ ແລະ ການນຳໃຊ້ງົບປະມານ**

ສະຫະພັນກຳມະບານແຕ່ລະຂັ້ນ ເປັນຜູ້ຂຶ້ນແຜນ ເພື່ອຂໍນຳໃຊ້ງົບປະມານ ພ້ອມທັງຄຸ້ມຄອງ ແລະ ນຳໃຊ້ງົບປະມານນັ້ນ ຢ່າງມີປະສິດທິຜົນ, ໂປ່ງໃສ ແລະ ກວດສອບໄດ້.

ສະຫະພັນກຳມະບານລາວແຕ່ລະຂັ້ນ ປະຕິບັດລະບອບບັນຊີ ລາຍຮັບ-ລາຍຈ່າຍ ແລະ ສະຫຼຸບລາຍງານໃຫ້ພາກສ່ວນກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 39 (ໃໝ່) ການຄຸ້ມຄອງ ແລະ ນຳໃຊ້ເງິນບຳລຸງ ຂອງສະມາຊິກກຳມະບານ**

ການຄຸ້ມຄອງ ແລະ ການນຳໃຊ້ເງິນບຳລຸງ ໃຫ້ປະຕິບັດຕາມກົດລະບຽບ ຂອງສະຫະພັນກຳມະບານລາວ.

**ມາດຕາ 40 (ໃໝ່) ກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ**

ກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ແມ່ນ ການປະກອບທຶນຮອນຂອງສະມາຊິກກອງທຶນ ເພື່ອຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໃນເວລາເຈັບເປັນ ຫຼື ພົບຄວາມຫຍຸ້ງຍາກ.

ການຄຸ້ມຄອງ ແລະ ການນຳໃຊ້ກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VI
## ການແກ້ໄຂຂໍ້ຂັດແຍ່ງດ້ານສິດ ແລະ ຜົນປະໂຫຍດ

**ມາດຕາ 41 (ໃໝ່) ຂໍ້ຂັດແຍ່ງດ້ານສິດ ແລະ ຜົນປະໂຫຍດ**

ຂໍ້ຂັດແຍ່ງດ້ານສິດ ແລະ ຜົນປະໂຫຍດ ແມ່ນ ຂໍ້ຂັດແຍ່ງລະຫວ່າງກຳມະກອນ ຫຼື ຊາວຜູ້ອອກແຮງງານອື່ນ ກັບຜູ້ໃຊ້ແຮງງານ ກ່ຽວກັບບັນຫາສິດ ແລະ ຜົນປະໂຫຍດ ໃນເວລາປະຕິບັດສັນຍາແຮງງານ.

**ມາດຕາ 42 (ປັບປຸງ) ວິທີການ ແກ້ໄຂຂໍ້ຂັດແຍ່ງດ້ານສິດ ແລະ ຜົນປະໂຫຍດ**

ການແກ້ໄຂຂໍ້ຂັດແຍ່ງດ້ານສິດ ແລະ ຜົນປະໂຫຍດ ລະຫວ່າງກຳມະກອນ ຫຼື ຊາວຜູ້ອອກແຮງງານອື່ນ ກັບຜູ້ໃຊ້ແຮງງານຢູ່ຫົວໜ່ວຍແຮງງານ ໃຫ້ປະຕິບັດດ້ວຍວິທີການ ໄກ່ເກ່ຍ ແບບປະນີປະນອມ.

ການໄກ່ເກ່ຍແບບປະນີປະນອມ ສາມາດປະຕິບັດ ໂດຍສະຫະພັນກຳມະບານ ຫຼື ຜູ້ຕາງໜ້າຜູ້ອອກແຮງງານ ກັບຜູ້ໃຊ້ແຮງງານ ຢູ່ຫົວໜ່ວຍແຮງງານນັ້ນ.

ໃນກໍລະນີ ທີ່ບໍ່ສາມາດແກ້ໄຂຂໍ້ຂັດແຍ່ງແບບປະນີປະນອມໄດ້ ຄູ່ກໍລະນີ ກໍສາມາດສະເໜີຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 43 (ປັບປຸງ) ຂໍ້ຫ້າມ ສຳລັບຄະນະບໍລິຫານງານ, ສະມາຊິກກຳມະບານ ແລະ ຜູ້ຕາງໜ້າຜູ້ອອກແຮງງານ**

ຫ້າມຄະນະບໍລິຫານງານ, ສະມາຊິກກຳມະບານ ແລະ ຜູ້ຕາງໜ້າຜູ້ອອກແຮງງານ ມີພຶດຕິກຳ ດັ່ງນີ້:

1. ບໍ່ປະຕິບັດ ພັນທະຂອງພົນລະເມືອງ, ຢຸດເຊົາການເຮັດວຽກ ຫຼື ຍົກເລີກສັນຍາແຮງງານ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ຫຼື ບໍ່ຖືກຕ້ອງຕາມກົດໝາຍ;

2. ສວຍໃຊ້ ໜ້າທີ່ຕຳແໜ່ງທາງລັດຖະການ, ໃຊ້ບັດສະມາຊິກກຳມະບານ ໄປເຄື່ອນໄຫວກະທຳສິ່ງທີ່ຜິດກົດໝາຍ;

3. ນຳພາ, ປຸກລະດົມ ຂົນຂວາຍ, ຈັດຕັ້ງເປັນກຸ່ມກ້ອນ, ພັກພວກ, ແບ່ງແຍກຄວາມສາມັກຄີ, ຊຸມນຸມປະທ້ວງ ຫຼື ກະທຳສິ່ງທີ່ກໍ່ໃຫ້ມີຄວາມປັ່ນປ່ວນ, ສ້າງຄວາມບໍ່ສະຫງົບ, ສ້າງຜົນເສຍຫາຍ ຕໍ່ການຈັດຕັ້ງ, ຕໍ່ຊີວິດ, ສຸຂະພາບຂອງບຸກຄົນ, ຊັບສິນຂອງລັດ, ລວມໝູ່ ແລະ ບຸກຄົນ ລວມທັງຂອງຫົວໜ່ວຍແຮງງານ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 44 (ປັບປຸງ) ຂໍ້ຫ້າມສຳລັບບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ຍົກຍ້າຍ, ຍົກເລີກສັນຍາແຮງງານ ຂອງປະທານ, ຮອງປະທານ, ປະທານກວດກາ ຫຼື ກຳມະການ ໃນຄະນະບໍລິຫານງານສະຫະພັນກຳມະບານ ອອກຈາກວຽກໂດຍບໍ່ມີເຫດຜົນ ແລະ ແຕ່ງຕັ້ງປ່ຽນແທນຕຳແໜ່ງນັ້ນ ໂດຍບໍ່ໄດ້ສົມທົບ ແລະ ບໍ່ໄດ້ຮັບຄວາມເຫັນດີເປັນລາຍລັກອັກສອນ ຈາກສະຫະພັນກຳມະບານຂັ້ນເທິງຖັດນັ້ນ;

2. ປອມແປງ, ຜະລິດ, ຈຳໜ່າຍ ຫຼື ນຳໃຊ້ເຄື່ອງໝາຍ, ເຄື່ອງແບບ, ຕາປະທັບ ຂອງສະຫະພັນກຳມະບານລາວ ໂດຍບໍ່ໄດ້ຮັບອະນຸຍາດ ຈາກສູນກາງສະຫະພັນກຳມະບານລາວ;

3. ລະເມີດສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນ; ສວຍໃຊ້ໜ້າທີ່, ຕຳແໜ່ງ ຍັກຍອກ, ສໍ້ໂກງ ເອົາຊັບສິນ ຂອງສະຫະພັນກຳມະບານລາວ ໄປເປັນຂອງຕົນ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ VIII
# ການກວດກາວຽກງານ ຂອງກຳມະບານລາວ

### ມາດຕາ 45 (ໃໝ່) ການກວດກາວຽກງານ ຂອງກຳມະບານລາວ

ການກວດກາວຽກງານ ຂອງກຳມະບານລາວ ແມ່ນ ການຕິລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່, ກົດໝາຍ, ກົດລະບຽບ ແລະ ລະບຽບການຕ່າງໆ ຂອງສະຫະພັນກຳມະບານລາວ ຢູ່ການຈັດຕັ້ງ ແລະ ຫົວໜ່ວຍແຮງງານ ທີ່ມີການຈັດຕັ້ງກຳມະບານ; ກວດກາການປະຕິບັດໜ້າທີ່, ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງ ຄະນະບໍລິຫານງານ, ພະນັກງານກຳມະບານ, ສະມາຊິກກຳມະບານ ຂັ້ນຂອງຕົນ ແລະ ຂັ້ນລຸ່ມຂອງຕົນ.

### ມາດຕາ 46 (ປັບປຸງ) ຄະນະກວດກາວຽກງານ ຂອງກຳມະບານລາວ

ຄະນະກວດກາວຽກງານ ຂອງກຳມະບານລາວ ແມ່ນ ຢູ່ໃນໂຄງປະກອບກົງຈັກການຈັດຕັ້ງ ຂອງສະຫະພັນກຳມະບານລາວ.

ຄະນະກວດກາວຽກງານ ຂອງກຳມະບານລາວແຕ່ລະຂັ້ນ ມີອາຍຸການ ເທົ່າກັນກັບອາຍຸການ ຂອງຄະນະບໍລິຫານງານສະຫະພັນກຳມະບານຂັ້ນດຽວກັນ. ປະທານກວດກາ ແມ່ນໄດ້ມາຈາກການເລືອກຕັ້ງໃນກອງປະຊຸມຄົ້ງປະຖົມມະລຶກ ຂອງຄະນະບໍລິຫານງານຂັ້ນຂອງຕົນ, ຮອງປະທານ ແລະ ກຳມະການຄະນະກວດກາ ແມ່ນປະທານສະຫະພັນກຳມະບານຂັ້ນນັ້ນ ເປັນຜູ້ແຕ່ງຕັ້ງ ຫຼື ປົດຕຳແໜ່ງ.

### ມາດຕາ 47 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກວດກາວຽກງານ ຂອງກຳມະບານລາວ

ຄະນະກວດກາວຽກງານ ຂອງກຳມະບານລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ, ຈັດຕັ້ງຜັນຂະຫຍາຍວຽກງານກວດກາ ເປັນແຜນການ, ແຜນງານ, ໂຄງການ ວຽກງານກວດກາກຳມະບານຂັ້ນຂອງຕົນ;
2. ກວດກາ ການປະຕິບັດ ແນວທາງ ນະໂຍບາຍ, ກົດໝາຍ ແລະ ການປະຕິບັດສົນທິສັນຍາ, ສັນຍາສາກົນ ທີ່ພົວພັນກັບວຽກງານກຳມະບານ;
3. ກວດກາ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຮອບດ້ານ ຂອງສະຫະພັນກຳມະບານຂັ້ນດຽວກັນ ແລະ ຂັ້ນລຸ່ມຂອງຕົນ;
4. ສະເໜີ ຄະນະປະທານສະຫະພັນກຳມະບານ ພິຈາລະນາໂຈະ ຫຼື ລົບລ້າງ ການປະຕິບັດນິຕິກຳຂອງສະຫະພັນກຳມະບານຂັ້ນລຸ່ມ ທີ່ຂັດກັບກົດໝາຍ, ຂັດກັບມະຕິ, ຄຳສັ່ງ ຂອງຂັ້ນເທິງ;
5. ປະສານສົມທົບ ກັບຄະນະກວດກາພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນອື່ນ ໃນຂັ້ນດຽວກັນ ເພື່ອປະຕິບັດໜ້າທີ່ວຽກງານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ສະເໜີ ວິທີການ ແລະ ມາດຕະການແກ້ໄຂ ຜົນຂອງການກວດກາຂອງຕົນ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 48 (ໃໝ່) ເນື້ອໃນ ການກວດກາ

ເນື້ອໃນການກວດກາວຽກງານ ຂອງກຳມະບານລາວ ມີ ດັ່ງນີ້:

1. ກວດກາ ການປະຕິບັດໜ້າທີ່ ຕາມພາລະບົດບາດ, ສິດ, ໜ້າທີ່, ຄວາມຮັບຜິດຊອບ ແລະ ແບບແຜນວິທີເຮັດວຽກຂອງຄະນະບໍລິຫານງານ, ພະນັກງານກຳມະບານ, ສະມາຊິກກຳມະບານ ຂັ້ນຂອງຕົນ ແລະ ຂັ້ນລຸ່ມຂອງຕົນ;

2. ກວດກາ ການຈັດຕັ້ງປະຕິບັດກົດໝາຍຂອງລັດ, ປະຕິບັດມະຕິກອງປະຊຸມ, ກົດລະບຽບຂອງສະຫະພັນກຳມະບານລາວ;

3. ກວດກາ ການປະຕິບັດຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງຄະນະບໍລິຫານງານຂັ້ນຂອງຕົນ;

4. ກວດກາ ການສ້າງ, ການຄຸ້ມຄອງ, ການນຳໃຊ້, ການປະຕິບັດນະໂຍບາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານອື່ນໆ;

5. ກວດກາ ສະພາບການຄຸ້ມຄອງ, ການນຳໃຊ້ ຊັບສິນ, ການເງິນ ລວມທັງກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຂອງສະຫະພັນກຳມະບານ ຂັ້ນຂອງຕົນ ແລະ ຂັ້ນລຸ່ມຂອງຕົນ.

### ມາດຕາ 49 ຮູບການການກວດກາ

ຮູບການການກວດກາວຽກງານກຳມະບານ ມີ ດັ່ງນີ້:

1. ການກວດກາປົກກະຕິ ຕາມແຜນການວຽກງານ ຊຶ່ງແມ່ນການກວດກາຕາມແຜນການ ແລະ ມີກຳນົດເວລາຢ່າງແນ່ນອນ ຂອງຄະນະກວດກາແຕ່ລະຂັ້ນ;

2. ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນການກວດກາຕາມຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຂອງຄະນະກວດກາ ແລະ ຄຳສະເໜີ ຂອງສະຫະພັນກຳມະບານລາວແຕ່ລະຂັ້ນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາຢ່າງຮີບດ່ວນ ໂດຍບໍ່ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ.

## ພາກທີ IX
## ວັນສ້າງຕັ້ງ, ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ

### ມາດຕາ 50 (ປັບປຸງ) ວັນສ້າງຕັ້ງສະຫະພັນກຳມະບານລາວ

ວັນສ້າງຕັ້ງສະຫະພັນກຳມະບານລາວ ແມ່ນ ວັນທີ 1 ກຸມພາ 1956.

ສະຫະພັນກຳມະບານແຕ່ລະຂັ້ນ ຈັດຕັ້ງຂະບວນການ ສະເຫຼີມສະຫຼອງວັນດັ່ງກ່າວ ທຸກປີ.

### ມາດຕາ 51 (ປັບປຸງ) ເຄື່ອງໝາຍ ຂອງສະຫະພັນກຳມະບານລາວ

ສະຫະພັນກຳມະບານລາວ ມີເຄື່ອງໝາຍ, ກາໝາຍ ແລະ ທຸງໄຊ ສະເພາະຂອງຕົນ ຊຶ່ງເນື້ອໃນຄວາມໝາຍ, ການຄຸ້ມຄອງ ແລະ ການນຳໃຊ້ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 52 (ໃໝ່) ເຄື່ອງແບບ ຂອງສະຫະພັນກຳມະບານລາວ

ສະຫະພັນກຳມະບານລາວ ມີເຄື່ອງແບບສະເພາະຂອງຕົນ ຊຶ່ງໄດ້ກຳນົດຮູບແບບ, ການຄຸ້ມຄອງ ແລະ ການນຳໃຊ້ ໄວ້ໃນລະບຽບການຕ່າງຫາກ.

ມາດຕາ 53 (ປັບປຸງ) ຕາປະທັບ

ສະຫະພັນກຳມະບານລາວແຕ່ລະຂັ້ນ ມີຕາປະທັບສະເພາະຂອງຕົນ ເພື່ອນຳໃຊ້ໃນການເຄື່ອນໄຫວວຽກງານທາງລັດຖະການ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 54 ນະໂຍບາຍຕໍ່ຜູ້ທີ່ມີຜົນຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 55 ມາດຕະການຕໍ່ຜູ້ທີ່ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ ຫຼື ລົງໂທດ ຕາມກໍລະນີເບົາ ຫຼື ໜັກ ພ້ອມທັງໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

## ພາກທີ XI
## ບົດບັນຍັດສຸດທ້າຍ

ມາດຕາ 56 (ປັບປຸງ) ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສະຫະພັນກຳມະບານລາວ ເປັນຜູ້ຈັດຕັ້ງປະຕິບັດ ກົດໝາຍສະບັບນີ້.

ມາດຕາ 57 (ປັບປຸງ) ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍກຳມະບານລາວ ສະບັບເລກທີ 12/ສພຊ ລົງວັນທີ 25 ທັນວາ 2007.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້